## ຮອງປະທານສະພາແຫ່ງຊາດ ຢ້ຽມຢາມ ແລະເຮັດວຽກຢູ່ແຂວງຊຽງຂວາງ.



(ຂປຊຊ): ໃນວັນທີ່ 4-6 ສິງຫາ 2010 ນີ້ ທ່ານ ດຣ ໄຊສົມພອນ ພົມວິຫານ ກຳມະການສູນກາງພັກ, ຮອງປະທານ ສະພາແຫ່ງຊາດ ພ້ອມຄະນະໄດ້ລົງເຄື່ອນໄຫວ ແລະ ເຮັດວຽກຢູ່ແຂວງຊຽງຂວາງ ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ສຈ.ດຣ ສົມກິດ ມັງໜໍ່ເມກ ເຈົ້າແຂວງຊຽງຂວາງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ພ້ອມ ພະນັກງານການນຳ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຂອງແຂວງຢ່າງອົບອຸ່ນ. ເຊິ່ງໄດ້ພົບປະໂອ້ລົມກັບຄະນະພັກ, ອຳນາດ ການປົກຄອງ, ພະແນກກົມກອງອ້ອມຂ້າງແຂວງ, ເມືອງພູກູດ ແລະ ເມືອງຜາໄຊ.

ທ່ານຮອງປະທານຍັງໄດ້ຮັບຟັງການລາຍງານ ສະພາບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຊຽງຂວາງ ໂດຍຫຍໍ້, ທ່ານໄດ້ສະແດງຄວາຍອາຍໍຊົມເຊີຍຕໍ່ຜົນງານດ້ານຕ່າງໆ ທີ່ແຂວງຈັດຕັ້ງປະຕິບັດໄດ້ຜ່ານມາ ເປັນຕົ້ນ ແມ່ນ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ຫັນເອົາກະສິກຳກາຍເປັນອຸດສະຫະກຳ ທີ່ທັນສະໄໝເທື່ອລະກ້າວ, ທ່ານຍັງ ຍົກໃຫ້ເຫັນສະພາບການຜັນປ່ຽນຢ່າງສັບສົນຂອງໂລກ ແລະ ພາກພື້ນທີ່ມີຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ່ VI ຫາກໍ່ສຳເລັດລົງໃນທ້າຍ ເດືອນ ມິຖຸນາຜ່ານມາ ແລະ ທ່ານໄດ້ແນະນຳໃຫ້ຄະນະພັກ, ອຳນາດການປົກຄອງຊີ້ນຳ ແລະ ນຳພາຢ່າງໃກ້ຊິດ ການພັດ ທະນາເສດຖະກິດ-ສັງຄົມ ຂອງແຂວງຊຽງຂວາງຄັ້ງທີ 5 ແລະ ແຜນພັດທະນາເສດຖະກິດ -ສັງຄົມ 5 ປີຕໍ່ໜ້າ ( 2011-2015 ) ແນໃສ່ການແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ສຳເລັດຜົນ.

ໃນໂອກາດເຄື່ອນໄຫວຢ້ຽມຢາມຄັ້ງນີ້ ທ່ານຮອງປະທານຍັງໄດ້ໄປຢ້ຽມຊົມໂຄງການກໍ່ສ້າງເສັ້ນທາງ 1D ແຕ່ບ້ານປຸ່ງໝັ້ນ ເມືອງພູກູດ ແຂວງຊຽງຂວາງ ຫາເມືອງວຽງທອງ ແຂວງຫົວພັນ.